ມັນຕົ້ນເປັນພືດທີ່ປູກງ່າຍ ມີລັກສະນະເດັ່ນ ຫລາຍຢ່າງເຊັ່ນ: ປູກໄດ້ໃນດິນທີ່ມີຄວາມອຸດົມສົມບູນຕ່ຳ, ທົນແລ້ງໄດ້ດີ, ມີຕະຫລາດກວ້າງຂວາງ, ມີບໍລິສັດຮັບຊື້ຢູ່ພາຍໃນ ແລະ ຕ່າງປະເທດ ແລະ ມີໂຮງງານຜະລິດແປງມັນຕົ້ນຂອງຈີນ ຢູ່ທີ່ບ້ານບຸ່ງເບົາ ເມືອງຍົມມະລາດ.



## ແນວພັນທີ່ນິຍົມປູກ

ແນວພັນມັນຕົ້ນ ທີ່ແນະນຳປູກໃນປະຈຸບັນແມ່ນ ເກັດມັງກອນ ລະຍອງ, ກະເສດສາດ, ແລະ ຫວ້ຍບົງ 60.

## ລະດູປູກທີ່ເໝາະສົມ

ລະດູປູກທີ່ເໝາະສົມ ແມ່ນຕົ້ນເດືອນ ມີນາ ຫາ ຕົ້ນເດືອນ ພຶດສະພາ.

## ວິທີກຽມທ່ອນພັນ

ທ່ອນພັນທີ່ຈະນຳມາປູກຕ້ອງມີອາຍຸ 8-12 ເດືອນ, ຕັດທ່ອນພັນມັນຕົ້ນໃຫ້ມີຄວາມຍາວ 25-30 ຊມ ໃຫ້ມີຈຳນວນຂໍ້ຕາ 7-10 ຕາ ນຳທ່ອນພັນແຊ່ລົງໃນນ້ຳໝັກຊີວະພາບ 1 ຄືນ (10-12 ຊົ່ວໂມງ)



## ການກຽມດິນ

ໄຖຕາກແດດໄວ້ 7-10 ມື້, ກ່ອນໄຖຄົ້ນໃຫ້ຫວ່ານປຸ໋ຍຊີວະພາບ 50 ກິໂລຕໍ່ໄລ່ ຈາກນັ້ນໄຖຄົ້ນເລິກ 25-30 ຊມ ຄາດປັບໜ້າດິນໃຫ້ຮາບພຽງ ເກັບຮາກໄມ້ ແລະ ຫຍ້າອອກຈາກພື້ນທີ່ໆຈະປູກອອກໃຫ້ໝົດ ແລ້ວໄຖຍົກຮ່ອງສູງ 30-40 ຊມ ໄລຍະຫ່າງຂອງຮ່ອງ 100-120 ຊມ.

## ວິທີປູກ

ສຽບທ່ອນພັນມັນຕົ້ນລົງດິນ ໃນແນວຕັ້ງ ໃຫ້ເລິກປະມານ 10 ຊມ ຫຼື 1/3 ຂອງທ່ອນພັນ. ໄລຍະຫ່າງຂອງແຖວ 80-100 ຊມ ໄລຍະຫ່າງ ຂອງຕົ້ນ 60-80 ຊມ, ໃນ 1 ເຮັກຕາ ຖ້າປູກ 80x100 ຊມ ປູກໄດ້ 12,500 ຂຸມ (12,500 ທ່ອນ)



## ການເສັຍຫຍ້າ ແລະ ໃສ່ຝຸ່ນ

ເມື່ອທ່ອນພັນມັນຕົ້ນ ແຕກຍອດໄດ້ 1 ຄືບ (20 ຊມ) ຫຼືຫລັງຈາກປູກໄດ້ 25-30 ວັນ ໃຫ້ເສັຍຫຍ້າ ແລ້ວສີດນ້ຳໝັກຊີວະພາບ. ຫລັງຈາກປູກໄດ້ 2-3 ເດືອນ ເສຍຫຍ້າອີກ ແລະ ສີດນ້ຳໝັກຊີວະພາບອີກ ເປັນຄັ້ງທີ່ສອງ. ອາຍຸມັນຕົ້ນໄດ້ 5-6 ເດືອນ ໃຫ້ສີດນ້ຳໝັກຊີວະພາບອີກ ເປັນຄັ້ງທີ່ສາມ.

## ການເກັບກ່ຽວ

ເມື່ອອາຍຸຂອງມັນຕົ້ນໄດ້ 8-12 ເດືອນ ກໍສາມາດ ເກັບກູ້ ຜົນຜະລິດໄດ້, ຕັດຕົ້ນມັນຕົ້ນອອກແລ້ວນໍາເອົາໄປຊໍາ ໄວ້ບ່ອນທີ່ຮົ່ມ ເພື່ອເປັນແນວພັນໃນລະດູຕໍ່ໄປ. ໃຊ້ໄມ້ງັດຊ່ວຍ ເພື່ອໃຫ້ຫົວມັນຕົ້ນຂຶ້ນງ່າຍ.







## ວິທີຕາກແຫ້ງ

ຫລັງຈາກເກັບກູ້ຫົວມັນຕົ້ນ ມາແລ້ວ ໃຫ້ຊອຍຫົວມັນຕົ້ນອອກບາງໆ ຫຼືໃຊ້ເຄື່ອງຈັກຕັດ ຫົວມັນຕົ້ນ ຍິ່ງເປັນການດີ ນໍາເອົາມັນຕົ້ນ ທີ່ຊອຍໄປຕາກແດດ ປະມານ 3-4 ແດດ ຫລັງຈາກ ຕາກແຫ້ງດີແລ້ວ ເອົາມັນຕົ້ນແຫ້ງ ບັນຈຸໃສ່ເປົາ ທີ່ຖ່າຍເທອາກາດ ໄດ້ດີບໍ່ໃຫ້ມີຄວາມຊຸມຢູ່ໃນເປົາ ແລະ ເກັບມ້ຽນໄວ້ບ່ອນທີ່ ອາກາດຖ່າຍເທດີ ບໍ່ໃຫ້ຖືກອາຍນໍ້າຝົນ

## ການຕະຫຼາດ

ປະຈຸບັນແມ່ນມີ ບໍລິສັດ ສົ່ງເສີມກະສິກໍາ ຈໍາກັດ ສໍານັກງານ ຕັ້ງຢູ່ ບ້ານເລົ່າໂພໄຊ ເມືອງ ທ່າແຂກ ຕາງໜ້າ ໂດຍ ທ່ານ. ຄັນທະເນດ ສະຫງ່າສີ ໂທລະສັບ (856-51) 250017 , 020 55755593 ລາຄາ ຫົວມັນຕົ້ນດິບ ຊື້ຢູ່ສວນ 400,000ກີບ ຕໍ່1ໂຕນ; ລາຄາມັນຕົ້ນຊອຍຕາກແຫ້ງ ຢູ່ບ້ານ 1,200,000 ກີບ ຕໍ່ໂຕນ.



## ວິທີເກັບມ້ຽນແນວພັນ

ນໍາເອົາລໍາມັນຕົ້ນໄປຊໍາໄວ້ບ່ອນທີ່ຮົ່ມເຢັນ

## ຂໍ້ແນະນໍາ

# ການປູກມັນຕົ້ນ

ມີນາ 2013



NTPC
Powering the Future

ບໍລິສັດ ໄຟຟ້ານໍ້າເທີນ 2 ຈໍາກັດ
ພະແນກ ສິ່ງແວດລ້ອມ ແລະ ສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ
ໜ່ວຍງານຟື້ນຟູຊີວິດການເປັນຢູ່